
ທຸກສິ່ງຖວາຍກຽດ
ແດ່ພຣະເຈົ້າ
ບົດຮຽນທີ 5 ສຳລັບສະບາໂຕທີ 1 ສິງຫາ, 2026


(1 ກຣທ 10:31)
“ເຫດສະນັ້ນ ເມື່ອເຈົ້າ
ທັງຫລາຍຈະກິດ ຈະດື່ມ
ຫລືຈະເຮັດສິ່ງໃດກໍດີ ຈົ່ງ
ເຮັດທຸກສິ່ງເພື່ອຖວາຍພຣະ
ກຽດແດ່ພຣະເຈົ້າ”

ເລີ່ມຈາກ 1 ກຣທ ບົດທີ 7, ອຈ ໂປໂລ ໄດ້ອຸທິດຕົນເພື່ອຕອບຄໍາຖາມຕ່າງໆ ທີ່ຊາວໂກຣິນໂທສົ່ງມາເຖິງລາວ (1 ກຣທ. 7:1a).

ດ້ວຍເຫດຜົນນີ້, ເຖິງວ່າບົດທີ 8 ເຖິງບົດທີ 10 ຈະກ່າວເຖິງເລື່ອງການບູຊາຮູບເຄົາລົບເປັນຫລັກ, ແຕ່ ອຈ ໂປໂລກໍ່ຍັງໄດ້ສອນເຖິງຫົວຂໍ້ອື່ນໆ ທີ່ເບິ່ງຄືວ່າຈະບໍ່ກ່ຽວຂ້ອງກັບຄວາມບາບນັ້ນໂດຍກົງ

ຢ່າງໃດກໍ່ຕາມ, ອຈ ໂປໂລ ຍັງໄດ້ພະຍາຍາມທີ່ຈະເຊື່ອມໂຍງຫົວຂໍ້ອື່ນໆເຂົ້ານໍາກັນ, ນັ້ນກໍ່ຄື ຄວາມຮັກ ແລະ ຄວາມເຄົາລົບເຊິ່ງກັນແລະກັນ, ເຊິ່ງຈະນໍາພາຄຣິດຕະຈັກໄປສູ່ຄວາມເປັນເອກະພາບ

ຄວບຄູ່ໄປກັບແນວຄິດນີ້, ອຈ ໂປໂລ ເນັ້ນຢໍ້າເຖິງຄວາມຈໍາເປັນທີ່ທຸກສິ່ງທຸກຢ່າງທີ່ເຮັດໃນຄຣິດຕະຈັກ ຫລື ໃນຊີວິດສ່ວນໂຕນັ້ນ ຈະຕ້ອງເຮັດເພື່ອຖວາຍກຽດແດ່ພຣະເຈົ້າ.



**1 ກຣທ 8**

ອາຫານທີ່ຖວາຍແກ່ຮູບເຄົາລົບ

(ຄວາມຮູ້ ແລະ ຄວາມຮັກ)

**1 ກຣທ 9**

ອຈ ໂປໂລ ສະຫລະສິດຂອງຕົນເອງ

(ສິດຂອງຂ່າວປະເສີດ)

**1 ກຣທ 10:1-13**

ຄໍາເຕືອນກ່ຽວກັບການບູຊາຮູບເຄົາລົບ

(ບົດຮຽນຈາກອະດີດ)

**1 ກຣທ 10:14-22**

ຈອກຂອງພຣະເຈົ້າ ແລະ ຈອກຂອງຮູບເຄົາລົບ

(ລະຖິ້ມຮູບເຄົາລົບ)

**1 ກຣທ 10:23-33**

ເຮັດທຸກສິ່ງເພື່ອຖວາຍກຽດແດ່ພຣະເຈົ້າ

(ສິ່ງໃດທີ່ຖືກຕ້ອງຕາມກົດໝາຍ ແລະ ສິ່ງໃດທີ່ບໍ່ເໝາະສົມ)



# ຄວາມຮູ້ ແລະ ຄວາມຮັກ

## 1 ກຣທ 8 (ອາຫານທີ່ຖວາຍແກ່ຮູບເຄົາລົບ)



"ຄວາມຮູ້ເຮັດໃຫ້ເຮົາອວດຕົວ ແຕ່ຄວາມຮັກເຮັດໃຫ້ຈະເລີນຂຶ້ນ." (1 ກຣທ 8:1)

ອຈ ໂປໂລ "ແບ່ງ" ຄຣິດຕະຈັກອອກເປັນສອງກຸ່ມ: ກຸ່ມທີ "ເຂັ້ມແຂງ" ແລະກຸ່ມທີ່ "ອ່ອນແອ".

| | | |
|---|---|---|
| 1 ກຣທ 8:4-7a | ກຸ່ມທີ່ເຂັ້ມແຂງເຂົ້າໃຈວ່າ ຮູບເຄົາລົບນັ້ນບໍ່ມີຫຍັງເລີຍ ເພາະມີພຣະເຈົ້າທີ່ທ່ຽງແທ້ພຽງອົງດຽວ. | ກຸ່ມອ່ອນແອຍັງບໍ່ເຂົ້າໃຈຈຸດນີ້ |
| 1 ກຣທ 8:7b | ກຸ່ມທີ່ເຂັ້ມແຂງກິນຊີ້ນທີ່ຖວາຍບູຊາແກ່ຮູບເຄົາລົບ, ເພາະພວກເຂົາຮູ້ວ່າ ຮູບເຄົາລົບບໍ່ສາມາດປົນເປື້ອນອາຫານໄດ້ | ກຸ່ມອ່ອນແອເຊື່ອວ່າພວກເຂົາກະທຳບາບຖ້າກິນຊີ້ນນັ້ນ |



ແຕ່ກຸ່ມທີ່ເຂັ້ມແຂງນັ້ນ ດ້ວຍຄວາມຮູ້ ແລະ ການປະພຶດຂອງຕົນເອງ ສາມາດເຮັດໃຫ້ກຸ່ມທີ່ອ່ອນແອສະດຸດລົ້ມລົງໄດ້ (1 ກຣທ 8:10). ດ້ວຍຄວາມຮັກຕໍ່ພີ່ນ້ອງຂອງຕົນເອງ ກຸ່ມທີ່ເຂັ້ມແຂງຈຶ່ງຕ້ອງຢັບຢັ້ງໃຈຕົນເອງ (1 ກຣທ 8:11-13).

ຄຣິສຕຽນຄວນໃຫ້ຄວາມຮັກມາກ່ອນຄວາມຮູ້, ເມື່ອຄວາມຮູ້ນັ້ນເປັນອຸປະສັກສຳລັບອ້າຍນ້ອງທີ່ ອ່ອນແອ (ເຊິ່ງຢູ່ໃນຂະບວນການເຕີບໃຫຍ່).



# ອະທິບາຍເພີ່ມ

ຖ້າວ່າພວກເຮົາກິນອາຫານທີ່ຖວາຍແກ່ພຣະທຽມເທັດ ຫລື ຮູບເຄົາລົບໂດຍທີ່ພວກເຮົາບໍ່ຮູ້ມາກ່ອນວ່າອາຫານນັ້ນໄດ້ຖວາຍໃຫ້ແກ່ພະທຽມເທັດແລ້ວ, ຖ້າເຮົາກິນ ເຮົາກໍ່ບໍ່ເປັນມົນທິນ ເພາະ ອຈ ໂປໂລ ບອກວ່າ: ອາຫານບໍ່ແມ່ນສິ່ງທີ່ຊ່ວຍໃຫ້ເຮົາມີຄວາມສຳພັນກັບພຣະເຈົ້າດີຂຶ້ນ ຖ້າເຮົາບໍ່ກິນ ເຮົາກໍ່ບໍ່ໄດ້ຊົ່ວລົງ, ຖ້າເຮົາກິນ ເຮົາກໍ່ບໍ່ໄດ້ດີຂຶ້ນ 1 ກຣທ 8:7-8

ເພາະໃນ 1 ກຣທ 10:28-29 ອຈ ໂປໂລກໍ່ກ່າວວ່າ: ແຕ່ຖ້າມີຜູ້ບອກພວກເຈົ້າວ່າ, ອາຫານນີ້ເຂົາໄດ້ຖວາຍແກ່ຮູບເຄົາຣົບແລ້ວ ກໍ່ຢ່າສູ່ກິນອາຫານນັ້ນ ເພາະເຫັນແກ່ຜູ້ທີ່ບອກພວກເຈົ້າ, ແລະ ເພາະເຫັນແກ່ໃຈສຳນຶກຜິດແລະຊອບ.

ແລະ ໃນພຣະຄຳພີ ກິດຈະການ 15:28-29 ອຈ ໂປໂລ ກໍ່ກ່າວວ່າ: ໃຫ້ງົດເວັ້ນເສຍຈາກກິນອາຫານທີ່ຖວາຍບູຊາແກ່ຮູບເຄົາຣົບແລ້ວ, ໃຫ້ງົດຈາກການກິນເລືອດ, ໃຫ້ງົດຈາກການກິນສັດທີ່ຕາຍ...

ໂດຍທົ່ວໄປແລ້ວ “ອາຫານ” ຢ່າງດຽວ ແມ່ນບໍ່ເປັນຫຍັງ ແຕ່ພຣະເຈົ້າຫ້າມບໍ່ໃຫ້ມີສ່ວນຮ່ວມກັບການນະມັດສະການບູຊາຮູບເຄົາລົບ, ຖ້າວ່າເຮົາກິນອາຫານທີ່ມີສ່ວນຮ່ວມກັບການຖວາຍບູຊາຮູບເຄົາລົບ ກໍ່ສຳກັບວ່າ ພວກເຮົາມີສ່ວນຮ່ວມກັບການນະມັດສະການຮູບເຄົາລົບນັ້ນ ເຊັ່ນກັນ. ເວັ້ນເສຍແຕ່ພວກເຮົາບໍ່ຮູ້ທີ່ໄປທີ່ມາຂອງອາຫານ

# ຂ່າວປະເສີດທີ່ຖືກຕ້ອງ

## 1 ກຣທ 9 (ອຈ ໂປໂລ ສະຫລະສິດຂອງຕົນເອງ)

"“ໃນທຳນອງດຽວກັນ ອົງພຣະຜູ້ເປັນເຈົ້າໄດ້ສັ່ງວ່າ, ຜູ້ທີ່ປະກາດຂ່າວປະເສີດ ກໍຄວນໄດ້ຮັບການລ້ຽງດູ ຈາກການປະກາດຂ່າວປະເສີດນັ້ນ. 1 ໂກຣິນໂທ 9:14

ອຈ ໂປໂລ ສະຫລະສິດຂອງຕົນເອງຢ່າງໜ້ອຍ 3 ປະການ ເພື່ອຜູ້ທີ່ອ່ອນແອ:



✳ ສິດທິທີ່ຈະໄດ້ຮັບການລ້ຽງດູ ຈາກຄຣິດຕະຈັກ (1 ກຣທ 9:4)

➢ເພິ່ນສະຫລະສິດຂອງຕົນເອງໃນຖານະອັກຄະທູດ ທີ່ຈະໄດ້ຮັບການລ້ຽງດູຄຣິດຕະຈັກທີ່ເພິ່ນໄດ້ຮັບໃຊ້ ເຊັ່ນດຽວກັນກັບອັກຄະທູດຄົນອື່ນໆ.



✳ ສິດທິ ໃນການເດີນທາງໄປພ້ອມກັບພັນລະຍາ (1 ກຣທ 9:5)

➢ໂດຍທົ່ວໄປແລ້ວ ອັກຄະທູດມັກຈະເດີນທາງໄປພ້ອມກັບພັນລະຍາ ເພື່ອເບິ່ງແຍງຊ່ວຍເຫລືອກັນໃນການຮັບໃຊ້ຂອງພວກເຂົາ, ພັນລະຍາກໍ່ມີສິດໄດ້ຮັບການລ້ຽງດູຈາກຄຣິດຕະຈັກເຊັ່ນດຽວກັນ.



✳ ສິດທິທີ່ຈະບໍ່ປະກອບອາຊີບເພື່ອລ້ຽງຊີບ ແບບທົ່ວໄປ (1 ກຣທ 9:6)

➢ອຈ ໂປໂລ ຕ້ອງຫາລ້ຽງຊີບດ້ວຍຕົນເອງເພື່ອບໍ່ໃຫ້ຜູ້ຄົນຄິດວ່າເພິ່ນໄດ້ເອົາປຽບສະມາຊິກ ແລະ ເພື່ອສະແດງໃຫ້ພວກເຂົາເຫັນເຖິງຄວາມເສຍສະຫລະ

ເຖິງວ່າ ອຈ ໂປໂລ ຈະເຮັດໃຫ້ຊັດເຈນວ່າ ຜູ້ທີ່ປະກາດຂ່າວປະເສີດນັ້ນ ຄວນດຳລົງຊີວິດຢູ່ດ້ວຍຂ່າວປະເສີດນັ້ນ, ແຕ່ທັງ ອຈ ໂປໂລ ແລະ ທ່ານ ບານາບາ ກໍ່ສະໝັກໃຈທີ່ຈະສະຫລະສິດນັ້ນເພື່ອບໍ່ໃຫ້ເປັນອຸປະສັກແກ່ຜູ້ເຊື່ອ (1 ກຣທ 9:12-14; ລກ 10:7).





# ບົດຮຽນຈາກອະດີດ

## 1 ກຣທ 10:1-13 (ຄຳຕັກເຕືອນຕໍ່ການບູຊາຮູບເຄົາຣົບ)

"ຢ່າກາຍເປັນຄົນຂາບໄຫວ້ຮູບເຄົາຣົບ ເໝືອນບາງຄົນໃນພວກເຂົານັ້ນໄດ້ຂາບໄຫວ້ ຕາມທີ່ມີຄຳຂຽນໄວ້ໃນພຣະຄຳພີວ່າ: ປະຊາຊົນໄດ້ນັ່ງລົງກິນແລະດື່ມ ແລ້ວກໍລຸກຂຶ້ນເຕັ້ນລຳ" (1 ກຣທ 10:7)







ປະສົບການຂອງການອົບພະຍົບຂອງຊາວອິດສະລາເອນ ຖ້າຫາກພວກເຮົາເຂົ້າໃຈໃນແງ່ຈິດວິນຍານແລ້ວ ປຽບໄດ້ກັບປະສົບການຂອງພວກເຮົາເອງ, ການຂ້າມທະເລແດງ ປຽບເໝືອນພັນທະສັນຍາແຫ່ງການຮັບບັບຕິສະມາ (1 ກຣທ 10:1-2).

ອາຫານ ແລະ ເຄື່ອງດື່ມທີ່ພວກເຮົາຮັບປະທານໃນທະເລຊາຍ ປຽບເໝືອນການມີສ່ວນຮ່ວມໃນພິທີສິນມະຫາສະໜິດຂອງພວກເຮົາ, ເຊິ່ງພວກເຮົາຮັບປະທານ ແລະ ດື່ມ. ໂດຍພຣະກາຍ ແລະ ພຣະໂລຫິດຂອງພຣະເຢຊູໃນເຊີງຈິດວິນຍານ (1 ກຣທ 10:3-4).









ຈົ່ງລະວັງ!, ເຖິງວ່າຈະມີປະສົບການເຊັ່ນນັ້ນກໍ່ຕາມ, ຊາວອິດສະຣາເອນກໍ່ຍັງຕົກຢູ່ໃນບາບຢ່າງຮ້າຍແຮງ, ລວມໄປເຖິງ ການບູຊາຮູບເຄົາຣົບ ແລະ ການຜິດສິນທຳ. ຂໍຢ່າໃຫ້ສິ່ງນັ້ນເກີດຂຶ້ນກັບພວກເຮົາ! (1 ກຣທ 10:5-10).

ດັ່ງນັ້ນ, ອັກຄະທູດຈຶ່ງສະຫລຸບສ່ວນນີ້ດ້ວຍຄຳແນະນຳອັນຊົງພະລັງວ່າ "ພວກເຈົ້າຢ່າຈົ່ມ ດັ່ງທີ່ບາງຄົນໃນພວກເຈົ້າໄດ້ຈົ່ມ ແລະ ພວກເຂົາກໍ່ຖືກທຳລາຍດ້ວຍເພັດຊະຄາດ (1 ກຣທ 10:12).

# ການລະຖິ້ມຮູບບູຊາເຄົາຣົບ

## 1 ກຣທ 10:14-22 (ຈອກຂອງພຣະເຈົ້າ ແລະ ຈອກຂອງຮູບເຄົາຣົບ)

"ເພາະສະນັ້ນ ພີ່ນ້ອງທີ່ຮັກທັງຫລາຍເອີຍ, ຈົ່ງເວັ້ນຈາກການຂາບໄຫວ້ຮູບເຄົາຣົບທັງສິ້ນ" (1 ກຣທ 10:14)



ຖ້າວ່າ ອາຫານທີ່ຖວາຍຮູບເຄົາຣົບບູຊາສາມາດກິນໄດ້ ໂດຍບໍ່ຕ້ອງກັງວົນ, ແລ້ວເປັນຫຍັງ ອຈ ໂປໂລ ຈຶ່ງເບິ່ງຄືເຕືອນບໍ່ໃຫ້ເຮັດແບບນັ້ນ? 1 ກຣທ 10:20?

ການກິນອາຫານຢູ່ທີ່ເຮືອນເປັນເລື່ອງໜຶ່ງ, ແຕ່ການກິນອາຫານໃນງານສະເຫລີມສະຫລອງໃນທີ່ສາທາລະນະ ທີ່ມີຮູບເຄົາຣົບກໍ່ເປັນອີກເລື່ອງໜຶ່ງ, ການເຂົ້າຮ່ວມໃນງານສະເຫລີມສະຫລອງແບບນັ້ນ ຜູ້ເຊື່ອຈະລະຖິ້ມຄວາມເຊື່ອຂອງຕົນເອງ ແລະ ຍອມຮັບການບູຊາຮູບເຄົາຣົບນັ້ນ.

ໂດຍການຮັບພິທີມະຫາສະໜິດ, ພວກເຮົາເປັນສ່ວນໜຶ່ງຂອງພຣະກາຍຂອງພຣະຄຣິດ (ຄຣິດຕະຈັກ), ໃນຂະນະທີ່ໂດຍການຮ່ວມໃນພິທີບູຊາຮູບເຄົາຣົບ, ໝາຍເຖິງພວກເຮົາມີສ່ວນຮ່ວມກັບເຫລົ່າຊາຕານ
(1 ກຣທ 10:16-20).

ພວກເຮົາບໍ່ສາມາດຮັບຈອກພິທີສິນມະຫາສະໜິດ ແລະ ຈອກສັນຣະເສີນຊາຕານໄດ້ໃນເວລາດຽວກັນ (1 ກຣທ 10:21).



# ສິ່ງໃດທີ່ຖືກຕ້ອງຕາມກົດໝາຍ ແລະ ສິ່ງໃດທີ່ເໝາະສົມ

## 1 ກຣທ 10:23-33 (ຈົ່ງເຮັດທຸກສິ່ງເພື່ອຖວາຍກຽດແກ່ພຣະເຈົ້າ)

"ສະນັ້ນ, ເມື່ອເຈົ້າທັງຫລາຍຈະກິນ ຈະດື່ມ ຫລືຈະເຮັດສິ່ງໃດກໍດີ ຈົ່ງເຮັດທຸກສິ່ງເພື່ອຖວາຍພຣະກຽດແດ່ພຣະເຈົ້າ" (1 ກຣທ 10:31)

"ເຮົາເຮັດທຸກສິ່ງສາລະພັດໄດ້ບໍ່ມີຜູ້ໃດຫ້າມ, ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນເປັນປະໂຫຍດ" (1 ກຣທ 10:23).
2 ຕົວຢ່າງທີ່ເປັນພື້ນຖານ:



ທີ່ຮ້ານຂາຍຊີ້ນ ຫລື ອາຫານ ຜູ້ເຊື່ອບໍ່ຄວນຖາມຫາແຫລ່ງທີ່ມາຂອງອາຫານເຫລົ່ານັ້ນ, ເພື່ອບໍ່ໃຫ້ເກີດຄວາມເຂົ້າໃຈຜິດວ່າການທີ່ລາວກິນຊີ້ນ ຫລື ອາຫານນັ້ນເປັນມົນທິນ ຫລື ສິ່ງທີ່ຜິດ (1 ກຣທ 10:25).

ຄົນທີ່ບໍ່ເຊື່ອໃນພຣະເຈົ້າ ໄດ້ເຊີນຄົນທີ່ເຊື່ອໃນພຣະເຈົ້າໄປກິນເຂົ້າ, ຄົນທີ່ເຊື່ອກໍ່ຄວນຮັບປະທານອາຫານນັ້ນໂດຍບໍ່ຕ້ອງຕັ້ງຄໍາຖາມ (ເພາະທຸກຢ່າງໄດ້ຮັບອະນຸຍາດສໍາລັບລາວແລ້ວ) ແຕ່ຖ້າວ່າ ເຈົ້າພາບກ່າວວ່າ ອາຫານ ຫລື ຊີ້ນນັ້ນ ເປັນຂອງຖວາຍໃຫ້ແກ່ຮູບເຄົາຣົບແລ້ວ ຈຶ່ງບໍ່ເໝາະສົມທີ່ຈະກິນ ອາຫານເຫລົ່ານັ້ນ, ແຕ່ກໍ່ບໍ່ຄວນເວົ້າອອກມາໃຫ້ຜູ້ອື່ນສະດຸດເຮົາຮູ້ຢູ່ແກ່ໃຈຕົນເອງ (1 ກຣທ 10:27-29).







ຫລັກການພື້ນຖານທີ່ຢູ່ເບື້ອງຫລັງຄໍາແນະນໍາເຫລົ່ານີ້ມີສອງປະການເຊັ່ນກັນຄື: ການສັນຣະເສີນພຣະເຈົ້າ ແລະ ການສະແຫວງຫາຜົນປະໂຫຍດຂອງຜູ້ອື່ນ (1 ກຣທ 10:31); (1 ກຣທ 10:24, 32).

ນັ້ນແມ່ນ ການຮັກພຣະເຈົ້າດ້ວຍສຸດໃຈ ແລະ ຮັກເພື່ອນບ້ານເໝືອນຮັກຕົນເອງ (ດັ່ງທີ່ພຣະເຢຊູຊົງສັ່ງຊາຍໜຸ່ມຜູ້ລໍ່າລວຍນັ້ງຄັ້ງນັ້ນ).

“ອັກຄະສາວົກໄດ້ຕັກເຕືອນຊາວໂກຣິນໂທວ່າ: "ໃຫ້ຜູ້ທີ່ຄິດວ່າຕົນເອງຢືນຢູ່ຢ່າງໝັ້ນຄົງນັ້ນ ລະມັດລະວັງ ຢ້ານວ່າລາວຈະລົ້ມລົງ." ຖ້າພວກເຂົາກາຍເປັນຄົນອວດອ້າງ ແລະ ເຊື່ອໝັ້ນໃນຕົນເອງເກີນໄປ, ໂດຍລະເລີຍການເຝົ້າລະວັງ ແລະ ການອະທິຖານ, ພວກເຂົາກໍຈະລົ້ມລົງໃນບາບອັນຮ້າຍແຮງ, ເຊິ່ງຈະນຳເອົາຄວາມໂກດຮ້າຍ (ຄວາມໂກດແຄ້ນ) ຂອງພຣະເຈົ້າສູ່ຕົນເອງ. [...]

ເປົາໂລໄດ້ກະຕຸ້ນ ພີ່ນ້ອງຂອງລາວ ໃຫ້ຖາມຕົນເອງວ່າ ຖ້ອຍຄຳ ແລະ ການກະທຳຂອງພວກເຂົາຈະມີອິດທິພົນແນວໃດຕໍ່ຄົນອື່ນ ແລະ ບໍ່ໃຫ້ເຮັດສິ່ງໃດ ເຖິງວ່າສິ່ງນັ້ນຈະບໍ່ມີຄວາມຜິດໃນໂຕມັນເອງກໍຕາມ ທີ່ເບິ່ງຄືວ່າເປັນການສະໜັບສະໜູນການໄຫວ້ຮູບເຄົາລົບ ຫຼື ເຮັດໃຫ້ຄວາມຮູ້ສຶກຜິດຊອບຊົ່ວດີຂອງຜູ້ທີ່ອາດຈະອ່ອນແອໃນຄວາມເຊື່ອຕ້ອງຂັດເຄືອງ. "ສະນັ້ນ ບໍ່ວ່າທ່ານຈະກິນ, ຈະດື່ມ, ຫຼື ຈະເຮັດສິ່ງໃດກໍຕາມ, ຈົ່ງເຮັດທຸກສິ່ງເພື່ອເປັນການຖວາຍກຽດ ຈີດງາມແກ່ພຣະເຈົ້າ. ຢ່າງເຮັດໃຫ້ຜູ້ໃດຜູ້ໜຶ່ງຫຼົງຜິດ, ບໍ່ວ່າຈະເປັນຊາວຢິວ, ຊາວຕ່າງຊາດ, ຫຼື ຄຣິສຕະຈັກຂອງພຣະເຈົ້າ."

**EGW (The Acts of the Apostles, p. 316)**